ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 160 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 16.12.09

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ການຄວບຄຸມຢາສູບ**

~~~~~~~~~~~~~~~~

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດໄດ້ຕົກລົງຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 199/ສພຊ, ລົງວັນທີ 26 ພະຈິກ 2009 ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍ ການຄວບຄຸມຢາສູບ;
- ອີງຕາມໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 086/ຄປຈ, ລົງວັນທີ 10 ທັນວາ 2009.

*ປະທານປະເທດ*

*ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດ :*

*ມາດຕາ 1* : ປະກາດໃຊ້ກົດໝາຍວ່າດ້ວຍ ການຄວບຄຸມຢາສູບ.

*ມາດຕາ 2* : ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ.

ຈູມມາລີ ໄຊຍະສອນ
~~~~~~~~~~~~~~~~

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ** ເລກທີ 199 /ສພຊ

# ມະຕິຕົກລົງ

ຂອງ

**ສະພາແຫ່ງຊາດ ແຫ່ງ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍ ການຄວບຄຸມຢາສູບ**

---

- ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ.

ພາຍຫລັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ VI ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ການຄວບຄຸມຢາສູບ ໃນວາລະປະຊຸມຕອນເຊົ້າຂອງວັນທີ 26 ພະຈິກ 2009,

## ກອງປະຊຸມໄດ້ຕົກລົງ:

ມາດຕາ 1. ຮັບຮອງເອົາກົດໝາຍວ່າດ້ວຍ ການຄວບຄຸມຢາສູບ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2. ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 26 ພະຈິກ 2009

ປະທານສະພາແຫ່ງຊາດ

ສະພາແຫ່ງຊາດ ປະທານ

ທອງສິງ ທຳມະວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------

ສະພາແຫ່ງຊາດ

ເລກທີ 07 /ສພຊ

ນະຄອນຫລວງວຽງຈັນ, ວັນທີ 26 ພະຈິກ 2009

# ກົດໝາຍ

# ວ່າດ້ວຍ ການຄວບຄຸມຢາສູບ

## ພາກທີ I

## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫລັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄວບຄຸມ, ການຄຸ້ມຄອງ, ການຕິດຕາມ, ກວດກາ ການຜະລິດ, ການນຳເຂົ້າ, ການຈຳຫນ່າຍ, ການໂຄສະນາ ຜະລິດຕະພັນຢາສູບ ເພື່ອປົກປ້ອງສຸຂະພາບ ຂອງພົນລະເມືອງ ຈາກຜົນຮ້າຍ ຂອງຢາສູບ, ແນໃສ່ ຫລຸດຜ່ອນການຊົມໃຊ້ ແລະ ຄ່າໃຊ້ຈ່າຍທີ່ບໍ່ຈຳເປັນ, ປົກປັກຮັກສາສິ່ງແວດລ້ອມ, ປະກອບສ່ວນເຂົ້າໃນການປົກປັກຮັກ ສາ ແລະ ພັດທະນາປະເທດຊາດ.

### ມາດຕາ 2. ການຄວບຄຸມຢາສູບ

ການຄວບຄຸມຢາສູບ ແມ່ນ ການນຳໃຊ້ມາດຕະການຕ່າງໆ ເພື່ອຄຸ້ມຄອງ, ຕິດຕາມ, ກວດກາ ການຜະລິດ, ການນຳເຂົ້າ, ການຈຳຫນ່າຍ, ການຊື້-ຂາຍ ຜະລິດຕະພັນຢາສູບ ແລະ ສະຖານທີ່ສູບຢາ ແນໃສ່ຫລຸດຜ່ອນຄວາມຕ້ອງການ, ຄວາມເປັນອັນຕະລາຍ ຈາກການຊົມໃຊ້ ຜະລິດຕະພັນຢາສູບ ແລະ ການໄດ້ຮັບຄວັນຢາສູບ.

**ມາດຕາ 3. ການອະທິບາຍຄໍາສັບ**

**ຄໍາສັບຕ່າງໆທີ່ນໍາໃຊ້ໃນກົດໝາຍສະບັບນີ້ ມີ ຄວາມໝາຍ ດັ່ງນີ້:**

1. **ຢາສູບ ໝາຍເຖິງ** ຜະລິດຕະພັນ ທີ່ຖືກປຸງແຕ່ງຈາກ ພືດລົ້ມລຸກຊະນິດໜຶ່ງ ທີ່ມີສານນິໂກຕິນ ຊຶ່ງເປັນທາດເບື່ອ ແລະ ເປັນສິ່ງເສບຕິດ;
2. **ການຊົມໃຊ້ຢາສູບ ໝາຍເຖິງ** ການສູບ, ການຄ້ຽວ, ການອົມ, ການດົມ ຜະລິດຕະພັນຢາສູບ;
3. **ຜະລິດຕະພັນຢາສູບ ໝາຍເຖິງ** ຢາເສັ້ນ, ກອກຢາສໍາເລັດຮູບ, ຢາຊິກາ ແລະ ຢາຮູບແບບ ອື່ນ ທີ່ນໍາໃຊ້ໃບຢາສູບເປັນວັດຖຸດິບທັງໝົດ ຫລື ສ່ວນໃດສ່ວນໜຶ່ງ;
4. **ການໄດ້ຮັບຄວັນຢາສູບ ໝາຍເຖິງ** ການທີ່ຜູ້ບໍ່ສູບຢາ ໄດ້ຮັບຄວັນທີ່ພົ່ນອອກມາຈາກຜູ້ສູບຢາ ຫຼື ຄວັນຈາກກອກຢາ ທີ່ຈູດປະໄວ້;
5. **ຜະລິດຕະພັນທີ່ຄ້າຍຄືຜະລິດຕະພັນຢາສູບ ໝາຍເຖິງ** ຜະລິດຕະພັນທີ່ຮຽນແບບ ຈາກຜະ ລິດຕະພັນຢາສູບ ເພື່ອເປັນການໂຄສະນາ, ຊັກຊວນໃຫ້ຊົມໃຊ້ຢາສູບ;
6. **ຢາສູບເຖື່ອນ ໝາຍເຖິງ** ຜະລິດຕະພັນຢາສູບແບບອຸດສາຫະກໍາທີ່ບໍ່ໄດ້ຮັບອະນຸຍາດໃຫ້ ຜະລິດ, ນໍາເຂົ້າ ແລະ ຈໍາໜ່າຍ;
7. **ເຄື່ອງຈັກຂາຍຢາສູບແບບອັດຕະໂນມັດ ໝາຍເຖິງ** ເຄື່ອງຈັກຂາຍຜະລິດຕະພັນຢາສູບທີ່ຜູ້ ຊົມໃຊ້ສາມາດຊື້ໄດ້ ໂດຍການນໍາໃຊ້ເງິນສົດ ຫລື ຢອດຫລຽນ ຫລື ບັດສະເພາະ;
8. **ອຸດສາຫະກໍາຢາສູບ ໝາຍເຖິງ** ໂຮງງານຜະລິດ, ບໍລິສັດນໍາເຂົ້າ ແລະ ຕົວແທນຈໍາໜ່າຍ ຜະລິດຕະພັນຢາສູບ ທີ່ຜະລິດແບບອຸດສາຫະກໍາ;
9. **ການອຸປະຖໍາຈາກອຸດສາຫະກໍາຢາສູບ ໝາຍເຖິງ** ການປະກອບສ່ວນທຸກປະເພດ ໂດຍທາງ ກົງ ຫລື ທາງອ້ອມ ຜ່ານກິດຈະກໍາ ແລະ ພາຫະນະໃດໜຶ່ງ ເພື່ອຈູງໃຈ ຫລື ສົ່ງເສີມການ ຂາຍ ແລະ ການຊົມໃຊ້ ຜະລິດຕະພັນຢາສູບ;
10. **ການຫຸ້ມຫໍ່ ໝາຍເຖິງ** ການບັນຈຸຜະລິດຕະພັນຢາສູບໃສ່ຊອງ, ຕຸດ, ຫີບ ແລະ ວັດສະດຸຫຸ້ມຫໍ່ ອື່ນໆ;
11. **ຢາເສັ້ນ ໝາຍເຖິງ** ຜະລິດຕະພັນຈາກໃບຢາສູບທີ່ຖືກຊອຍເປັນເສັ້ນ ແລ້ວນໍາມາຊົມໃຊ້ ດ້ວຍການ ພັນ, ຍັດກອກ, ຍັດບັ້ງ, ອົມ, ຄ້ຽວ, ດົມ.

**ມາດຕາ 4. ນະໂຍບາຍຂອງລັດກ່ຽວກັບການຄວບຄຸມຢາສູບ**

ລັດ ຄວບຄຸມຢາສູບ ດ້ວຍການວາງນະໂຍບາຍ, ມາດຕະການຕ່າງໆ ເຊັ່ນ: ເພີ່ມພາສີອາກອນ, ກໍານົດສະຖານທີ່ຫ້າມສູບຢາ, ສະຖານທີ່ຈໍາໜ່າຍ, ຊື້-ຂາຍ ຢາສູບ ແລະ ສົ່ງເສີມ ຊາວກະສິກອນ ປູກພືດອື່ນທົດແທນການປູກຢາສູບ.

ລັດ ເອົາໃຈໃສ່ໂຄສະນາ, ສຶກສາອົບຮົມທົ່ວສັງຄົມດ້ວຍຫລາຍຮູບການ ເພື່ອສ້າງຈິດສໍານຶກໃຫ້**ເຫັນ ໄດ້ພິນຮ້າຍຂອງຢາສູບ ແລະ ບໍ່ຊົມໃຊ້ຢາສູບ.**

ລັດ ຊຸກຍູ້ສົ່ງເສີມ ບຸກຄົນ, ຄອບຄົວ, ການຈັດຕັ້ງທຸກພາກສ່ວນໃຫ້ເຂົ້າຮ່ວມໃນການຄວບຄຸມຢາສູບ ລວມທັງບຳບັດຜູ້ອອກຢາສູບ, ປິ່ນປົວ ຜູ້ໄດ້ຮັບຜົນຮ້າຍ, ເຈັບເປັນ ຈາກຄວັນຢາສູບ.

ລັດ ຄຸ້ມຄອງການຜະລິດ, ການນຳເຂົ້າ, ການຈຳໜ່າຍ, ການຊື້-ຂາຍ ແລະ ການຊົມໃຊ້ຜະລິດຕະພັນຢາສູບ ແນໃສ່ ຫລຸດຜ່ອນ ການສູບຢາຂອງປະຊາຊົນບັນດາເຜົ່າ, ຫລຸດຜ່ອນ ການເປັນພະຍາດ ແລະ ຄ່າໃຊ້ຈ່າຍຕ່າງໆທີ່ບໍ່ຈຳເປັນຈາກການຊົມໃຊ້ຢາສູບ ເພື່ອສົ່ງເສີມໃຫ້ພົນລະເມືອງທຸກຄົນມີສຸຂະພາບແຂງແຮງ.

ລັດ ຈັດສັນງົບປະມານ, ພາຫະນະ ແລະ ວັດຖຸອຸປະກອນ ທີ່ຈຳເປັນໃຫ້ແກ່ວຽກງານຄວບຄຸມຢາສູບ.

### ມາດຕາ 5. ຫລັກການກ່ຽວກັບການຄວບຄຸມຢາສູບ

**ການຄວບຄຸມຢາສູບ ຕ້ອງປະຕິບັດຕາມຫລັກການ ດັ່ງນີ້:**

1. ຮັບປະກັນການຄຸ້ມຄອງ, ການຕິດຕາມ, ກວດກາ ຢ່າງລວມສູນ ໃນທົ່ວປະເທດ ແລະ ສົ່ງເສີມການມີສ່ວນຮ່ວມ ຢ່າງກວ້າງຂວາງຂອງບຸກຄົນ ແລະ ການຈັດຕັ້ງ;
2. ໃຫ້ພົນລະເມືອງທຸກຄົນ ດຳລົງຊີວິດ ຢູ່ໃນສະພາບແວດລ້ອມທີ່ປອດຄວັນຢາສູບ, ສາມາດເຂົ້າເຖິງການບຳບັດ ເພື່ອອອກຢາສູບ ແລະ ປິ່ນປົວເມື່ອໄດ້ຮັບຜົນຮ້າຍຈາກຢາສູບ;
3. ຕ້ອງເລີ່ມຈາກບຸກຄົນ, ຄອບຄົວ ໂດຍມີສ່ວນຮ່ວມຂອງການຈັດຕັ້ງ ແລະ ສັງຄົມ ໃນການແກ້ໄຂຜົນຮ້າຍຂອງຢາສູບ;
4. ປະຕິບັດຕາມການກຳນົດສະຖານທີ່ສູບຢາຢ່າງເຂັ້ມງວດ ໃນການຊົມໃຊ້ຜະລິດຕະພັນຢາສູບ ເປັນຕົ້ນ ການສູບຢາ.

### ມາດຕາ 6. ພັນທະຂອງພົນລະເມືອງກ່ຽວກັບການຄວບຄຸມຢາສູບ

ບຸກຄົນ, ຄອບຄົວ ແລະ ການຈັດຕັ້ງ ທີ່ຢູ່ ສປປ ລາວ ມີພັນທະປະກອບສ່ວນເຂົ້າໃນວຽກງານຄວບຄຸມ, ຄຸ້ມຄອງ, ຕິດຕາມ, ກວດກາ ຢາສູບ ດ້ວຍການເປັນແບບຢ່າງໃນການປະຕິບັດລະບຽບກົດໝາຍກ່ຽວກັບການຄວບຄຸມຢາສູບ, ສຶກສາອົບຮົມ, ແນະນຳ ຜູ້ທີ່ຢູ່ໃກ້ຄຽງ ຫຼື ຢູ່ໃນການຄຸ້ມຄອງຂອງຕົນ ໃຫ້ເຫັນໄດ້ຜົນຮ້າຍ ຈາກການຊົມໃຊ້ຢາສູບ.

### ມາດຕາ 7. ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ການຄວບຄຸມ ການຜະລິດ, ນຳເຂົ້າ, ຈຳໜ່າຍ, ຊື້-ຂາຍ ຜະລິດຕະພັນຢາສູບ ແບບອຸດສາຫະກຳ ແລະ ສະຖານທີ່ສູບຢາ ໃນຂອບເຂດ ສປປ ລາວ.

**ມາດຕາ 8. ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກນິກ, ເຕັກໂນໂລຊີ, ການຝຶກອົບຮົມ, ການກໍ່ສ້າງຍົກລະດັບພະນັກງານ ລວມທັງການຍາດແຍ່ງທຶນຮອນ, ພາຫະນະ ແລະ ອຸປະກອນຕ່າງໆ ເພື່ອເຮັດໃຫ້ວຽກງານຄວບຄຸມຢາສູບ ມີປະສິດທິຜົນ ໂດຍສອດຄ່ອງກັບ ສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

# ພາກທີ II

# ປະເພດຜະລິດຕະພັນ ແລະ ຜົນຮ້າຍຂອງຢາສູບ

## ໝວດທີ 1

## ປະເພດຜະລິດຕະພັນຢາສູບ

**ມາດຕາ 9. ປະເພດຜະລິດຕະພັນ**

**ຜະລິດຕະພັນຢາສູບ ມີ ສອງ ປະເພດ ຄື:**

- ຜະລິດຕະພັນແບບອຸດສາຫະກຳ;
- ຜະລິດຕະພັນແບບຫັດຖະກຳ.

**ມາດຕາ 10. ຜະລິດຕະພັນແບບອຸດສາຫະກຳ**

ຜະລິດຕະພັນແບບອຸດສາຫະກຳ ແມ່ນ ຜະລິດຕະພັນທີ່ຜະລິດດ້ວຍເຄື່ອງຈັກ ໃນໂຮງຈັກ ໂຮງງານ ຊຶ່ງສາມາດຜະລິດໄດ້ເປັນຈຳນວນຫລວງຫລາຍ.

**ມາດຕາ 11. ຜະລິດຕະພັນແບບຫັດຖະກຳ**

ຜະລິດຕະພັນແບບຫັດຖະກຳ ແມ່ນ ຜະລິດຕະພັນທີ່ຜະລິດດ້ວຍມື ຫຼື ການນຳໃຊ້ເຄື່ອງມືແບບປະຖົມປະຖານ.

**ມາດຕາ 12. ຊະນິດຜະລິດຕະພັນຢາສູບ**

ຜະລິດຕະພັນຢາສູບ ມີ ຫລາຍຊະນິດ ຄື ຢາເສັ້ນ, ຢາຊອງ, ຢາຊີກາ ແລະ ຢາຊະນິດອື່ນໆ ທີ່ນຳໃຊ້ໃບຢາສູບເປັນວັດຖຸດິບທັງໝົດ ຫລື ສ່ວນໃດສ່ວນໜຶ່ງ.

# ໝວດທີ 2

## ຜົນຮ້າຍຂອງຢາສູບ

### ມາດຕາ 13. ຜົນຮ້າຍຕໍ່ສຸຂະພາບ

ການຊົມໃຊ້ຢາສູບ ເປັນຕົ້ນ ການສູບຢາ ແມ່ນ ມີຜົນຮ້າຍຕໍ່ສຸຂະພາບຂອງຜູ້ສູບ ແລະ ຜູ້ໄດ້ຮັບຄວັນຢາສູບ ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ ຊຶ່ງມີຄວາມສ່ຽງໃນການເປັນພະຍາດຮ້າຍແຮງ ເຊັ່ນ ມະເຮັງປອດ, ພະຍາດເສັ້ນເລືອດຫົວໃຈ-ສະໝອງ, ພະຍາດຊໍາເຮື້ອລະບົບຫາຍໃຈ, ລະບົບລະລາຍ, ລະບົບປະສາດ, ພະຍາດອື່ນໆ ແລະ ນໍາໄປສູ່ການເສັຍຊີວິດ.

### ມາດຕາ 14. ຜົນກະທົບຕໍ່ເສດຖະກິດ-ສັງຄົມ

ການຊົມໃຊ້ຢາສູບ ນອກຈາກຈະມີຜົນຮ້າຍຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 13 ຂອງກົດໝາຍສະບັບນີ້ແລ້ວ ຍັງເປັນການທໍາລາຍສຸຂະພາບຂອງຜູ້ອອກແຮງງານ, ຜູ້ຜະລິດ ທັງເພີ່ມຄ່າໃຊ້ຈ່າຍທີ່ບໍ່ຈໍາເປັນ ຊຶ່ງເປັນຜົນກະທົບທາງລົບຕໍ່ການພັດທະນາ ເສດຖະກິດ-ສັງຄົມ ຂອງຊາດ ແລະ ເປັນການທໍາລາຍສິ່ງແວດລ້ອມ.

### ມາດຕາ 15. ຜົນກະທົບຕໍ່ຄອບຄົວ

ການຊົມໃຊ້ຢາສູບ ນອກຈາກຈະມີຜົນຮ້າຍຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 13 ຂອງ ກົດໝາຍສະບັບນີ້ ແລະ ມີຜົນຮ້າຍຕໍ່ສະມາຊິກຂອງຄອບຄົວ ເປັນຕົ້ນ ແມ່ຍິງ ແລະ ເດັກນ້ອຍ ແລ້ວ ຜູ້ສູບຢາຍັງຕ້ອງໄດ້ຈ່າຍເງິນເຂົ້າໃນການຊື້ຢາສູບ ແລະ ປິ່ນປົວພະຍາດທີ່ເກີດຂຶ້ນ ຊຶ່ງເປັນການເພີ່ມພາລະແບກຫາບ ຂອງຄອບຄົວ.

# ພາກທີ III

# ການຄວບຄຸມຜະລິດຕະພັນຢາສູບ

## ໝວດທີ 1

## ການຄວບຄຸມການຜະລິດ, ນຳເຂົ້າ, ຈຳໜ່າຍ ຜະລິດຕະພັນຢາສູບ

### ມາດຕາ 16. ການຄວບຄຸມການຜະລິດ

ການຜະລິດຢາສູບແບບອຸດສາຫະກຳຢູ່ ສປປ ລາວ ຕ້ອງຢູ່ໃຕ້ການຄວບຄຸມ, ຄຸ້ມຄອງ, ຕິດຕາມ, ກວດກາ ຢ່າງເຂັ້ມງວດ ແລະ ປະຕິບັດຕາມການກຳນົດ ຂອງອົງການຄຸ້ມຄອງ ແລະ ກວດກາວຽກງານຄວບຄຸມຢາສູບ ເປັນຕົ້ນ ມາດຕະຖານເຕັກນິກ, ການພິມສະຫລາກ ແລະ ຄຳເຕືອນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 33 ແລະ 34 ຂອງກົດໝາຍ ສະບັບນີ້.

### ມາດຕາ 17. ການຄວບຄຸມການນຳເຂົ້າ

ການນຳເຂົ້າຜະລິດຕະພັນຢາສູບ ໃນ ສປປ ລາວ ຕ້ອງຢູ່ໃຕ້ການຄວບຄຸມ, ຄຸ້ມຄອງ, ຕິດຕາມ, ກວດກາ ຢ່າງເຂັ້ມງວດ ເຊັ່ນ ການອະນຸຍາດ, ການພິມສະຫລາກ, ຄຳເຕືອນ ແລະ ປະຕິບັດຕາມລະບຽບການຂອງລັດ.

### ມາດຕາ 18. ການຄວບຄຸມການຈຳໜ່າຍ

ການຈຳໜ່າຍຜະລິດຕະພັນຢາສູບໃນ ສປປ ລາວ ຕ້ອງໄດ້ຮັບອະນຸຍາດຕາມລະບຽບການສະເພາະ ແລະ ຜ່ານການກວດກາຈາກຂະແໜງການທີ່ກ່ຽວຂ້ອງຂອງລັດ.

ຜະລິດຕະພັນຢາສູບ ບໍ່ອະນຸຍາດໃຫ້ຈຳໜ່າຍ ຫລື ຊື້ຂາຍ ຢູ່ສະຖານທີ່ ດັ່ງນີ້:

1. ສະຖານທີ່ບໍລິການສາທາລະນະສຸກ;
2. ສະຖານທີ່ການສຶກສາ;
3. ສຳນັກງານ, ອົງການຂອງລັດ;
4. ໂຮງມະຫໍລະສົບ ເຊັ່ນ ໂຮງຮູບເງົາ, ໂຮງລະຄອນ, ໂຮງກາຍຍະສິນ, ຫໍວັດທະນະທຳ, ຫໍພິພິທະພັນ; ສະໜາມກິລາ, ສະໜາມອອກກຳລັງກາຍ;
5. ໃນພາຫະນະໂດຍສານ.

ສະຖານທີ່ຂາຍຍ່ອຍຜະລິດຕະພັນຢາສູບ ຕ້ອງເປັນບ່ອນທີ່ເໝາະສົມ ແລະ ໄດ້ຮັບການອະນຸຍາດ.
ຜະລິດຕະພັນຢາສູບ ຈະບໍ່ຖືກອະນຸຍາດໃຫ້ຈຳໜ່າຍ ຫລື ຊື້ຂາຍແກ່ເດັກທີ່ມີອາຍຸຕ່ຳກວ່າ ສິບແປດປີ.

## ໝວດທີ 2

## ການບັນຈຸ ແລະ ການຫຸ້ມຫໍ່ ຜະລິດຕະພັນຢາສູບ

### ມາດຕາ 19. ການບັນຈຸຜະລິດຕະພັນຢາສູບ

ເພື່ອຫລຸດຜ່ອນ ຄວາມສາມາດໃນການຊື້ ແລະ ການຊົມໃຊ້ຢາສູບ ຂອງເດັກນ້ອຍນັ້ນ ການບັນຈຸຜະລິດຕະພັນຢາສູບ ຕ້ອງບໍ່ໃຫ້ຕໍ່າກວ່າ ຊາວກອກຕໍ່ຊອງ ຫຼື ຫ້າສິບກອກຕໍ່ກະປ໋ອງ.

### ມາດຕາ 20. ການຫຸ້ມຫໍ່ ຜະລິດຕະພັນຢາສູບ

ການຫຸ້ມຫໍ່ ຊອງ, ຕຸດ, ຫໍ່, ກະປ໋ອງ, ຫີບ ຜະລິດຕະພັນຢາສູບ ຕ້ອງມີການພິມສະຫລາກ ແລະ ຄໍາເຕືອນ ຕາມການກໍານົດ ຂອງລັດຖະບານ.

## ໝວດທີ 3

## ພັນທະຂອງຜູ້ຜະລິດ, ນໍາເຂົ້າ, ຈໍາຫນ່າຍ ແລະ ຜູ້ຊົມໃຊ້ ຜະລິດຕະພັນຢາສູບ

### ມາດຕາ 21. ພັນທະທົ່ວໄປ

**ຜູ້ຜະລິດ, ນໍາເຂົ້າ ແລະ ຈໍາຫນ່າຍ ຜະລິດຕະພັນຢາສູບ ມີ ພັນທະທົ່ວໄປ ດັ່ງນີ້:**

1. ປະຕິບັດລະບຽບກົດໝາຍກ່ຽວກັບການຄວບຄຸມຢາສູບຢ່າງເຂັ້ມງວດ;
2. ມອບເງິນເຂົ້າກອງທຶນຄວບຄຸມຢາສູບ ຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ 2 ມາດຕາ 46 ຂອງກົດໝາຍສະບັບນີ້;
3. ດໍາເນີນທຸລະກິດຢ່າງໂປ່ງໃສ ສາມາດກວດສອບໄດ້.

ສໍາລັບຜູ້ຊື້-ຂາຍ ຜະລິດຕະພັນຢາສູບ ມີ ພັນທະປະຕິບັດຕາມ ຂໍ້ທີ 1 ຂອງ ມາດຕານີ້.

### ມາດຕາ 22. ພັນທະຂອງຜູ້ຜະລິດ

**ນອກຈາກພັນທະທົ່ວໄປທີ່ໄດ້ກໍານົດໄວ້ໃນ ມາດຕາ 21 ຂອງກົດໝາຍສະບັບນີ້ແລ້ວ ຜູ້ຜະລິດຜະລິດຕະພັນຢາສູບ ຍັງມີພັນທະ ດັ່ງນີ້:**

1. ພິມສະຫລາກ, ຄໍາເຕືອນ ທີ່ເປັນຂໍ້ຄວາມ ໃສ່ວັດຖຸຫຸ້ມຫໍ່ຜະລິດຕະພັນຢາສູບ ຕາມລະບຽບການ;
2. ປົກປັກຮັກສາສິ່ງແວດລ້ອມ ເປັນຕົ້ນ ໃນຂອບເຂດພື້ນທີ່ ການຜະລິດຂອງຕົນ;

3. ປ້ອງກັນ ແລະ ສົ່ງເສີມສຸຂະພາບ ຂອງຜູ້ອອກແຮງງານ ໃນການຜະລິດຢາສູບ ຕາມລະບຽບການ.

**ມາດຕາ 23. ພັນທະຂອງຜູ້ນຳເຂົ້າ**

ນອກຈາກພັນທະທົ່ວໄປທີ່ໄດ້ກຳນົດໄວ້ໃນ ມາດຕາ 21 ຂອງກົດໝາຍສະບັບນີ້ແລ້ວ ຜູ້ນຳເຂົ້າຜະລິດຕະພັນຢາສູບ ຍັງມີພັນທະຮັບປະກັນການນຳເຂົ້າຜະລິດຕະພັນຢາສູບ ທີ່ມີການພິມສະຫລາກ, ຄຳເຕືອນ ທີ່ເປັນຂໍ້ຄວາມ ໃສ່ວັດຖຸຫຸ້ມຫໍ່ຜະລິດຕະພັນຢາສູບ ຢ່າງຖືກຕ້ອງ ຕາມລະບຽບການ.

**ມາດຕາ 24. ພັນທະຂອງຜູ້ຈຳໜ່າຍ**

**ນອກຈາກພັນທະທົ່ວໄປທີ່ໄດ້ກຳນົດໄວ້ໃນ ມາດຕາ 21 ຂອງກົດໝາຍສະບັບນີ້ແລ້ວ ຜູ້ຈຳໜ່າຍ, ຊື້-ຂາຍ ຍັງມີພັນທະ ດັ່ງນີ້:**

1. ຮັບປະກັນໃຫ້ມີສະຖານທີ່ ທີ່ເໝາະສົມ ໃນການຈຳໜ່າຍ, ຊື້-ຂາຍ ຜະລິດຕະພັນ ຢາສູບ;
2. ຈຳໜ່າຍ, ຊື້-ຂາຍ ຜະລິດຕະພັນຢາສູບ ທີ່ມີການພິມສະຫລາກ ແລະ ຄຳເຕືອນ ເປັນຂໍ້ຄວາມ ຢ່າງຖືກຕ້ອງ ຕາມລະບຽບການ ເທົ່ານັ້ນ.

**ມາດຕາ 25. ພັນທະຂອງຜູ້ຊົມໃຊ້ຜະລິດຕະພັນຢາສູບ**

**ຜູ້ຊົມໃຊ້ຜະລິດຕະພັນຢາສູບ ມີ ພັນທະ ດັ່ງນີ້:**

1. ສູບຢາໃນສະຖານທີ່ອະນຸຍາດ;
2. ປົກປັກຮັກສາສິ່ງແວດລ້ອມ ເປັນຕົ້ນ ການບໍ່ຖິ້ມກົດກອກຢາຊະຊາຍ;
3. ເຄົາລົບສິດຂອງຜູ້ບໍ່ສູບຢາ ແລະ ຜູ້ຢູ່ໃກ້ຄຽງ.

## ໝວດທີ 4

## ຄວາມຮັບຜິດຊອບກ່ຽວກັບການຄວບຄຸມຢາສູບ

**ມາດຕາ 26. ຄວາມຮັບຜິດຊອບຂອງລັດ**

ລັດ ມີຄວາມຮັບຜິດຊອບຕໍ່ວຽກງານ ຄວບຄຸມ, ຄຸ້ມຄອງ, ຕິດຕາມ ກວດກາ ຢາສູບ ດ້ວຍການວາງນະໂຍບາຍ, ລະບຽບກົດໝາຍ ກ່ຽວກັບວຽກງານດັ່ງກ່າວ ລວມທັງການບຳບັດ ຜູ້ອອກຢາສູບ, ການປິ່ນ

ປົວຜູ້ຕິດຢາສູບ, ຜູ້ໄດ້ຮັບຜົນຮ້າຍ ຈາກຢາສູບ, ການສະໜອງງົບປະມານ, ພາຫະນະ, ອຸປະກອນ ແລະ ບຸກຄະລາກອນ ໃຫ້ແກ່ວຽກງານຄວບຄຸມຢາສູບ ເປັນຕົ້ນ ວຽກງານໂຄສະນາສຶກສາອົບຮົມ ກ່ຽວກັບຜົນຮ້າຍ ຂອງຢາສູບ.

**ມາດຕາ 27. ຄວາມຮັບຜິດຊອບຂອງຂະແໜງການທີ່ກ່ຽວຂ້ອງ**

ຂະແໜງການທີ່ກ່ຽວຂ້ອງ ມີຄວາມຮັບຜິດຊອບ ຈັດຕັ້ງໜ່ວຍງານຄວບຄຸມຢາສູບສະເພາະ ແລະ ຊີ້ນຳ, ຕິດຕາມ, ກວດກາ ສາຍຕັ້ງຂອງຕົນໃນການປະຕິບັດວຽກງານດັ່ງກ່າວ ຕາມພາລະບົດບາດ, ສິດ ແລະ ໜ້າທີ່.

**ມາດຕາ 28. ຄວາມຮັບຜິດຊອບຂອງສັງຄົມ ແລະ ຊຸມຊົນ**

ສັງຄົມ ແລະ ຊຸມຊົນ ມີຄວາມຮັບຜິດຊອບ ໃນການໂຄສະນາເຜີຍແຜ່, ປຸກລະດົມ ໃຫ້ທຸກຊັ້ນຄົນ ເຫັນໄດ້ຜົນຮ້າຍຂອງຢາສູບ, ການບໍ່ສູບຢາເປັນຄ່ານິຍົມຂອງສັງຄົມ ແລະ ພ້ອມກັນ ເຂົ້າຮ່ວມໃນການຄວບຄຸມຢາສູບ ເປັນຕົ້ນ ຫລຸດຜ່ອນການຊົມໃຊ້ຢາສູບ, ສູບຢາຢູ່ໃນສະຖານທີ່ອະນຸຍາດ ແລະ ໃຫ້ການບຳບັດ ຜູ້ອອກຢາສູບ, ປິ່ນປົວຜູ້ຕິດຢາສູບ ແລະ ຜູ້ໄດ້ຮັບຜົນຮ້າຍຈາກຢາສູບ.

**ມາດຕາ 29. ຄວາມຮັບຜິດຊອບຂອງຄອບຄົວ**

ຄອບຄົວ ມີບົດບາດສຳຄັນ ແລະ ມີຄວາມຮັບຜິດຊອບ ໃນການສຶກສາອົບຮົມ, ໃຫ້ຄຳແນະນຳແກ່ ສະມາຊິກຄອບຄົວໃຫ້ຮູ້ເຖິງຜົນຮ້າຍຂອງຢາສູບ ທັງເປັນແບບຢ່າງ ໃນການຫ່າງໄກຈາກຢາສູບ, ເຂົ້າຮ່ວມ ຂະບວນການຄວບຄຸມ, ຄຸ້ມຄອງ, ຕິດຕາມ, ກວດກາ ຢາສູບ ແລະ ໃຫ້ການບຳບັດ, ປິ່ນປົວ ເມື່ອສະມາຊິກ ຄອບຄົວ ຫາກອອກຢາສູບ ແລະ ຜູ້ໄດ້ຮັບຜົນຮ້າຍຈາກຢາສູບ ລວມທັງ ຕິດຕາມຜູ້ທີ່ອອກຢາສູບແລ້ວ ບໍ່ໃຫ້ ກັບຄືນມາສູບໃໝ່.

**ມາດຕາ 30. ຄວາມຮັບຜິດຊອບຂອງບຸກຄົນ**

ພົນລະເມືອງລາວທຸກຄົນ ເປັນຕົ້ນ ເຍົາວະຊົນ, ຊາວໜຸ່ມ, ນັກຮຽນ, ນັກສຶກສາ ຕ້ອງເປັນເຈົ້າຕົນ ເອງ ໃນການຫ່າງໄກຈາກຢາສູບ, ຕ້ານແນວຄິດຢາກ ລອງສູບຢາ.

ພໍ່ແມ່, ຜູ້ປົກຄອງ, ຄູ-ອາຈານ ຕ້ອງ ເປັນແບບຢ່າງ ໃນການຫ່າງໄກຈາກຢາສູບ ແລະ ໃຫ້ຄຳແນະນຳແກ່ລູກຫລານ, ນັກຮຽນ, ນັກສຶກສາຂອງຕົນ ບໍ່ໃຫ້ສູບຢາ. ຜູ້ເປັນລູກຫລານ, ນັກຮຽນ, ນັກສຶກສາ ກໍຕ້ອງຟັງຄຳແນະນຳດັ່ງກ່າວ, ເມື່ອຕິດຢາສູບແລ້ວ ກໍຕ້ອງຕັດສິນໃຈຕື່ນຕົວ ຮັບການບຳບັດ ເພື່ອອອກຢາສູບ.

# ພາກທີ IV

# ການປົກປ້ອງສຸຂະພາບຈາກຜົນຮ້າຍຂອງຢາສູບ

## ໝວດທີ 1

## ການໂຄສະນາ ແລະ ການສະໜອງຂໍ້ມູນ-ຂ່າວສານ ກ່ຽວກັບຜົນຮ້າຍຂອງຢາສູບ

### ມາດຕາ 31. ການໂຄສະນາ, ສຸຂະສຶກສາ ກ່ຽວກັບຜົນຮ້າຍຂອງຢາສູບ

ການໂຄສະນາ, ສຸຂະສຶກສາ ແມ່ນ ການໃຫ້ຄວາມຮູ້, ການປຸກລະດົມ ໃຫ້ຄົນຫ່າງໄກ ຈາກຢາສູບ ລວມທັງ ການສະໜອງຂໍ້ມູນ ຂ່າວສານ ທີ່ມີລັກສະນະວິທະຍາສາດ ທີ່ພົວພັນກັບການສູບຢາ, ການໄດ້ຮັບຄວັນຢາສູບ ແລະ ຜົນຮ້າຍ ທີ່ມາຈາກການສູບຢາ ດ້ວຍຮູບການ ແລະ ວິທີການຕ່າງໆ ເປັນຕົ້ນ ຜ່ານສື່ມວນຊົນ.

ບຸກຄົນ ແລະ ການຈັດຕັ້ງ ເປັນຕົ້ນ ຂະແໜງການ ສາທາລະນະສຸກ, ຖະແຫລງຂ່າວ ແລະ ວັດທະນະທຳ, ສຶກສາ, ກິລາ-ກາຍຍະກຳ, ທ່ອງທ່ຽວ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ຕ້ອງເອົາໃຈໃສ່ ໂຄສະນາ, ສຸຂະສຶກສາກ່ຽວກັບຜົນຮ້າຍຂອງຢາສູບໃຫ້ພົນລະເມືອງ ໂດຍສະເພາະ ເຍົາວະຊົນ, ຊາວໜຸ່ມ, ນັກຮຽນ-ນັກສຶກສາ ເພື່ອປູກຈິດສຳນຶກບໍ່ໃຫ້ສູບຢາ ລວມທັງ ປຸກລະດົມ, ຊວນເຊື່ອ ແລະ ສ້າງສິ່ງຈູງໃຈໃຫ້ ແກ່ຜູ້ສູບຢາ ເພື່ອອອກຢາສູບ.

### ມາດຕາ 32. ການສະໜອງຂໍ້ມູນ-ຂ່າວສານ ກ່ຽວກັບຜົນຮ້າຍຂອງຢາສູບ

ຂະແໜງການ ສາທາລະນະສຸກ, ສຶກສາ, ຖະແຫລງຂ່າວ ແລະ ວັດທະນະທຳ, ທ່ອງທ່ຽວ, ແນວລາວສ້າງຊາດ, ແມ່ຍິງ, ຊາວໜຸ່ມ, ກຳມະບານ ແລະ ການຈັດຕັ້ງອື່ນໃນສັງຄົມ ທັງພາກລັດ ແລະ ເອກະຊົນ ມີຄວາມຮັບຜິດຊອບ ແລະ ປະກອບສ່ວນເຂົ້າໃນການສະໜອງຂໍ້ມູນ-ຂ່າວສານ ກ່ຽວກັບຜົນຮ້າຍຂອງຢາສູບ ໃຫ້ປະຊາຊົນ ຢ່າງເປັນປົກກະຕິ.

ປະຊາຊົນທຸກຄົນ ມີສິດໄດ້ຮັບຂໍ້ມູນ-ຂ່າວສານ ກ່ຽວກັບວຽກງານຄວບຄຸມຢາສູບ ເປັນຕົ້ນ ຜົນຮ້າຍຂອງການຊົມໃຊ້ຢາສູບ, ຜົນດີຂອງການບໍ່ຊົມໃຊ້ຢາສູບ, ການອອກຢາສູບ ແລະ ສິ່ງແວດລ້ອມ ທີ່ປອດຄວັນຢາສູບໂດຍຜ່ານ ສື່ມວນຊົນ ແລະ ກິດຈະກຳຕ່າງໆ.

## ໝວດທີ 2

## ການພິມ ສະຫລາກ ແລະ ຄຳເຕືອນ ໃສ່ຜະລິດຕະພັນຢາສູບ

**ມາດຕາ 33. ສະຫລາກ**

ສະຫລາກ ແມ່ນ ຂໍ້ຄວາມ ດ້ວຍການກຳນົດຂອງລັດຖະບານ ທີ່ພິມໃສ່ ດ້ານຂ້າງ ທາງນອກຂອງ ແຕ່ລະຊອງ, ແຕ່ລະທໍ່, ແຕ່ລະຖຸດ ແລະ ແຕ່ລະຫີບ ເພື່ອສະແດງ ໃຫ້ຜູ້ຊົມໃຊ້ຢາສູບຮັບຮູ້.

ຜະລິດຕະພັນຢາສູບ ທີ່ຈຳໜ່າຍໃນ ສປປ ລາວ ຕ້ອງໄດ້ພິມສະຫລາກ ທີ່ໄດ້ກຳນົດໄວ້ ໃນວັກເທິງນີ້.

**ມາດຕາ 34. ຄຳເຕືອນ**

ຄຳເຕືອນ ແມ່ນ ຂໍ້ຄວາມ ດ້ວຍການກຳນົດຂອງລັດຖະບານ ທີ່ພິມໃສ່ ຢູ່ດ້ານໜ້າ ແລະ ດ້ານຫລັງຂອງ ແຕ່ລະຊອງ, ແຕ່ລະທໍ່, ແຕ່ລະຖຸດ ແລະ ແຕ່ລະຫີບ ຂອງຜະລິດຕະພັນຢາສູບ ເພື່ອສະແດງໃຫ້ຜູ້ຊົມໃຊ້ ຢາສູບຮັບຮູ້ວ່າ ຜະລິດຕະພັນນີ້ ເປັນອັນຕະລາຍ ແລະ ມີຜົນຮ້າຍຕໍ່ສຸຂະພາບຂອງຄົນ.

ຜະລິດຕະພັນຢາສູບ ທີ່ຈຳໜ່າຍໃນ ສປປ ລາວ ຕ້ອງໄດ້ພິມຄຳເຕືອນ ທີ່ໄດ້ກຳນົດໄວ້ ໃນວັກເທິງນີ້.

## ໝວດທີ 3

## ລາຄາຢາສູບ

**ມາດຕາ 35. ລາຄາຢາສູບ**

ລາຄາຜະລິດຕະພັນຢາສູບ ຕ້ອງໄດ້ຮັບການດັດສົມໂດຍຜ່ານນະໂຍບາຍພາສີອາກອນ ໃນແຕ່ລະໄລຍະ ເພື່ອຫລຸດຜ່ອນການຊົມໃຊ້ຢາສູບຢູ່ໃນສັງຄົມ.

ຂະແໜງການທີ່ກ່ຽວຂ້ອງຂອງລັດ ມີໜ້າທີ່ຕິດຕາມ, ເກັບກຳຂໍ້ມູນ ກ່ຽວກັບລາຄາຜະລິດຕະພັນຢາສູບ ໃນແຕ່ລະໄລຍະ ເພື່ອປັບປຸງນະໂຍບາຍພາສີອາກອນ ກ່ຽວກັບຜະລິດຕະພັນຢາສູບໃຫ້ສົມເຫດສົມຜົນ.

ຜູ້ຈຳໜ່າຍຜະລິດຕະພັນຢາສູບ ຕ້ອງຕິດລາຄາ ເພື່ອຄວາມສະດວກສຳລັບຜູ້ຊົມໃຊ້ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

**ມາດຕາ 36. ການເກັບພາສີ ອາກອນ**

ເຈົ້າໜ້າທີ່ ພາສີ ອາກອນ ຕ້ອງໄດ້ຕິດຕາມ, ກວດກາ ແລະ ເກັບພາສີ ອາກອນ ກ່ຽວກັບການຜະລິດ, ນຳເຂົ້າ, ຈຳໜ່າຍ ຜະລິດຕະພັນຢາສູບ ໃນ ສປປ ລາວ ຕາມລະບຽບກົດໝາຍ ຢ່າງຄົບຖ້ວນ ແລະ ເຂັ້ມງວດ.

## ໝວດທີ 4
## ສະຖານທີ່ຫ້າມສູບຢາ

**ມາດຕາ 37. ສະຖານທີ່ຫ້າມສູບຢາ**

**ສະຖານທີ່ຫ້າມສູບຢາທຸກປະເພດ ມີ ດັ່ງນີ້:**

1. ສະຖານທີ່ບໍລິການ ສາທາລະນະສຸກ;
2. ສະຖານທີ່ການສຶກສາ, ຫ້ອງປະຊຸມ, ໂຮງມະຫໍລະສົບ;
3. ພາຍໃນພາຫະນະໂດຍສານ ທາງບົກ, ທາງນ້ຳ ແລະ ທາງອາກາດ;
4. ສະຖານທີ່ມີເຊື້ອໄຟ ເຊັ່ນ: ນ້ຳມັນ, ເຄມີ ແລະ ອື່ນໆ;
5. ສະຖານທີ່ອື່ນທີ່ມີປ້າຍຫ້າມສູບຢາ ແລະ ສະຖານທີ່ປອດຄວັນຢາສູບ.

**ມາດຕາ 38. ສະຖານທີ່ຕ້ອງໄດ້ຈັດບ່ອນສະເພາະໃຫ້ສູບຢາ**

**ສະຖານທີ່ຕ້ອງໄດ້ຈັດຫ້ອງ ຫລື ບ່ອນ ສະເພາະໃຫ້ສູບຢາ ມີ ດັ່ງນີ້:**

1. ສຳນັກງານ ຂອງລັດ ແລະ ເອກະຊົນ;
2. ສູນການຄ້າ, ຮ້ານສັບພະສິນຄ້າ, ເຮືອນພັກ, ໂຮງແຮມ, ຮ້ານອາຫານ, ສະຖານທີ່ບັນເທີງ ແລະ ຕະຫຼາດ;
3. ສະຖານທີ່ສາທາລະນະ ແລະ ຊຸມຊົນແອອັດ ເຊັ່ນ ບ່ອນລໍຖ້າຂອງ ຜູ້ໂດຍສານ, ສະໜາມຝຶກຊ້ອມ ແລະ ແຂ່ງຂັນກິລາ, ສະໂມສອນ, ວັດວາອາຮາມ, ໂບດ, ສວນສາທາລະນະ.

# ພາກທີ V

# ການແກ້ໄຂຜົນຮ້າຍຂອງຢາສູບ

## ໝວດທີ 1

## ການຊ່ວຍເຫລືອຜູ້ຕິດຢາສູບ

**ມາດຕາ 39. ການປຸກລະດົມ, ຊວນເຊື່ອ ໃຫ້ອອກຢາສູບ**

ບຸກຄົນ ແລະ ການຈັດຕັ້ງ ເອົາໃຈໃສ່ປຸກລະດົມ, ຊວນເຊື່ອ, ບອກວິທີ ໃຫ້ຜູ້ຕິດຢາສູບ ຮັບຮູ້ ແລະ ເຂົ້າໃຈເຖິງຜົນຮ້າຍຂອງຢາສູບ ທີ່ມີຕໍ່ຕົນເອງ, ຄອບຄົວ, ສັງຄົມ ແລະ ເສດຖະກິດ ເພື່ອໃຫ້ຜູ້ກ່ຽວ ຕື່ນຕົວ ຫລຸດຜ່ອນ, ຈໍາກັດ ແລະ ກ້າວໄປເຖິງການອອກຢາສູບ.

**ມາດຕາ 40. ການບໍາບັດ, ປິ່ນປົວ**

ຜູ້ຕິດຢາສູບ, ຜູ້ໄດ້ຮັບຜົນຮ້າຍຈາກຢາສູບ ຕ້ອງສະຫມັກໃຈຕື່ນຕົວຮັບການບໍາບັດ ແລະ ປິ່ນປົວ ດ້ວຍການເອົາໃຈໃສ່ ແລະ ຊ່ວຍເຫລືອຈາກຄອບຄົວ, ຊຸມຊົນ, ສັງຄົມ ແລະ ໂຮງໝໍ.

**ມາດຕາ 41. ການຊ່ວຍເຫລືອຜູ້ອອກຢາສູບ**

**ການຊ່ວຍເຫລືອຜູ້ຕື່ນຕົວອອກຢາສູບ ຕ້ອງດໍາເນີນໂດຍຫນ່ວຍງານໃຫ້ຄໍາປຶກສາ ແລະ ຊ່ວຍເຫລືອຜູ້ອອກຢາສູບ ດັ່ງນີ້:**

1. ໃຫ້ຄໍາປຶກສາ ແລະ ແນະນໍາ ກ່ຽວກັບການອອກຢາສູບ;
2. ແນະນໍາກ່ຽວກັບສຸຂະພາບຂອງຜູ້ສູບຢາ ກ່ອນ ແລະ ຫລັງການອອກຢາສູບ;
3. ຈັດກິດຈະກໍາຕ່າງໆ ເພື່ອອອກຢາສູບ;
4. ໃຫ້ການ ບໍາບັດ ແລະ ປິ່ນປົວ ຜູ້ຕື່ນຕົວອອກຢາສູບ ດ້ວຍຮູບການຕ່າງໆ ແລະ ຕາມເງື່ອນໄຂຕົວຈິງ.

**ມາດຕາ 42. ພາລະບົດບາດ ຂອງຫນ່ວຍງານໃຫ້ຄໍາປຶກສາ ແລະ ຊ່ວຍເຫລືອຜູ້ອອກຢາສູບ**

ໜ່ວຍງານໃຫ້ຄໍາປຶກສາ ແລະ ຊ່ວຍເຫລືອຜູ້ອອກຢາສູບ ໄດ້ຮັບການສ້າງຕັ້ງຂຶ້ນ ໂດຍຂະແໜງການສາທາລະນະສຸກ ຊຶ່ງມີພາລະບົດບາດ ໃນການໂຄສະນາ, ສຸຂະສຶກສາ, ໃຫ້ຄໍາແນະນໍາ, ຄໍາປຶກສາ ແລະ ການຊ່ວຍເຫລືອທີ່ຈໍາເປັນ ແກ່ຜູ້ອອກຢາສູບ, ເກັບກໍາ ຂໍ້ມູນສະຖິຕິ, ຕິດຕາມ, ກວດກາການຊ່ວຍ

ເຫລືອຜູ້ອອກຢາສູບ ແລະ ລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ຂັ້ນເທິງຂອງຕົນຢ່າງເປັນປົກກະຕິ.

### ມາດຕາ 43. ຄວາມຮັບຜິດຊອບຂອງພາກສ່ວນອື່ນຕໍ່ຜູ້ອອກຢາສູບ

ນອກຈາກຫນ່ວຍງານໃຫ້ຄໍາປຶກສາ ແລະ ຊ່ວຍເຫລືອຜູ້ອອກຢາສູບແລ້ວ ອົງການຈັດຕັ້ງ, ສັງຄົມ, ຊຸມຊົນ, ຄອບຄົວ ແລະ ຫມູ່ເພື່ອນ ມີຄວາມຮັບຜິດຊອບໃນການຊ່ວຍເຫລືອ, ສະຫນັບສະຫນູນ ຜູ້ອອກຢາສູບ ດ້ວຍການແນະນໍາ, ການສ້າງກິດຈະກໍາຕ່າງໆ ເພື່ອບໍ່ໃຫ້ຜູ້ກ່ຽວກັບມາສູບຢາຄືນ.

### ມາດຕາ 44. ການຊ່ວຍເຫລືອຜູ້ໄດ້ຮັບຄວັນຢາສູບ

ຜູ້ໄດ້ຮັບຄວັນຢາສູບ ຕ້ອງໄດ້ຮັບການຊ່ວຍເຫລືອດ້ວຍ ການແນະນໍາ ກ່ຽວກັບຜົນຮ້າຍຂອງຄວັນຢາສູບ, ເປັນເຈົ້າການປົກປ້ອງຕົນເອງ ດ້ວຍການອອກຫ່າງຈາກຜູ້ສູບຢາ ຫລື ມີສິດສະເຫນີໃຫ້ຜູ້ສູບຢາໄປສູບຢູ່ບ່ອນອື່ນທີ່ຫ່າງໄກຈາກຕົນ. ເມື່ອໄດ້ຮັບຜົນຮ້າຍ, ເຈັບເປັນ ຈາກຄວັນຢາສູບແລ້ວ ຜູ້ກ່ຽວກໍຈະໄດ້ຮັບການຊ່ວຍເຫລືອ, ເບິ່ງແຍງ ແລະ ປິ່ນປົວ ຕາມເງື່ອນໄຂ ຕົວຈິງ.

## ໝວດທີ 2

## ກອງທຶນຄວບຄຸມຢາສູບ

### ມາດຕາ 45. ກອງທຶນຄວບຄຸມຢາສູບ

ລັດ ສົ່ງເສີມໃຫ້ສ້າງຕັ້ງກອງທຶນຄວບຄຸມຢາສູບ ເພື່ອຮັບໃຊ້ວຽກງານຄວບຄຸມຢາສູບ ເປັນຕົ້ນວຽກງານໂຄສະນາ, ສຸຂະສຶກສາ, ການບໍາບັດຜູ້ອອກຢາສູບ ແລະ ຜູ້ໄດ້ຮັບຜົນຮ້າຍຈາກຄວັນຢາສູບ ແລະ ນໍາໃຊ້ເຂົ້າໃນບັນດາກິດຈະກໍາຕ່າງໆເພື່ອສົ່ງເສີມສຸຂະພາບ.

### ມາດຕາ 46. ແຫລ່ງຂອງກອງທຶນ

**ກອງທຶນຄວບຄຸມຢາສູບ ໄດ້ມາຈາກແຫລ່ງຕົ້ນຕໍ ດັ່ງນີ້:**

1. ງົບປະມານຂອງລັດ;
2. ອາກອນກໍາໄລ ຂອງຜູ້ດໍາເນີນທຸລະກິດ ຜະລິດຕະພັນຢາສູບ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍ ສ່ວຍສາອາກອນ;
3. ການບໍລິຈາກຂອງບຸກຄົນ, ການຈັດຕັ້ງ ພາຍໃນ ແລະ ສາກົນ;
4. ການເຄື່ອນໄຫວກິດຈະກໍາຫາລາຍໄດ້ ເພື່ອວຽກງານຄວບຄຸມຢາສູບ ເຊັ່ນ ການແຂ່ງຂັນກິລາ - ກາຍຍະກໍາ, ການສະແດງສິລະປະວັນນະຄະດີ ແລະ ອື່ນໆ.

**ມາດຕາ 47. ການຄຸ້ມຄອງ ແລະ ນຳໃຊ້ກອງທຶນ**

ກອງທຶນຄວບຄຸມຢາສູບ ແມ່ນ ຄະນະກຳມະການແຫ່ງຊາດ ເພື່ອການຄວບຄຸມຢາສູບ ເປັນຜູ້ຄຸ້ມຄອງ ແລະ ນຳໃຊ້ ຕາມແຜນການວຽກງານໃນແຕ່ລະໄລຍະ.

ກອງທຶນດັ່ງກ່າວ ນຳໃຊ້ເພື່ອຮັບໃຊ້ວຽກງານ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 45 ຂອງກົດໝາຍສະບັບນີ້ ໂດຍສອດຄ່ອງກັບລະບຽບກົດໝາຍກ່ຽວກັບງົບປະມານແຫ່ງລັດ.

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກອງທຶນຄວບຄຸມຢາສູບ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

# ພາກທີ VI
# ຂໍ້ຫ້າມກ່ຽວກັບຢາສູບ

**ມາດຕາ 48. ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດຢາສູບ**

**ຫ້າມຜູ້ດຳເນີນທຸລະກິດຢາສູບ ມີ ການກະທຳ ດັ່ງນີ້:**

1. ໂຄສະນາໃນທຸກຮູບແບບ ເພື່ອເປັນການຊຸກຍູ້ ສົ່ງເສີມ ການສູບຢາ, ການຈຳໜ່າຍ ແລະ ການຊື້-ຂາຍ ຜະລິດຕະພັນຢາສູບ;
2. ຜະລິດ, ນຳເຂົ້າ, ຊື້-ຂາຍ ຜະລິດຕະພັນ ຢາສູບເຖື່ອນ, ປອມ, ໝົດອາຍຸ, ຮຽນແບບ, ບໍ່ມີສະຫລາກ, ບໍ່ມີຄຳເຕືອນ ແລະ ບໍ່ຕິດສະແຕັມ ຕາມລະບຽບກົດໝາຍ;
3. ຂາຍ ຫລື ຈຳໜ່າຍຜະລິດຕະພັນຢາສູບ ຢ່າງຊະຊາຍ ເປັນຕົ້ນ ໃນສະຖານທີ່ ທີ່ບໍ່ອະນຸຍາດ ໃຫ້ຂາຍ;
4. ຜະລິດຢາຊອງທີ່ບັນຈຸຕ່ຳກວ່າ ຊາວ ກອກ, ຂາຍ ຢາຊອງ, ຢາກະປ໋ອງ ເປັນກອກ;
5. ຂາຍຢາສູບດ້ວຍເຄື່ອງຈັກອັດຕະໂນມັດທຸກຊະນິດ;
6. ບໍ່ໃຫ້ເດັກ ທີ່ມີອາຍຸຕ່ຳກວ່າ ສິບແປດ ປີ ຊື້-ຂາຍຢາສູບ;
7. ເຮັດໃຫ້ຜູ້ຊົມໃຊ້ເກີດຄວາມເຂົ້າໃຈຜິດ ຕໍ່ຄຸນລັກສະນະຂອງຜະລິດຕະພັນຢາສູບ ເຊັ່ນ: ເຄື່ອງໝາຍການຄ້າ, ຮູບແບບ, ສີສັນ ຫລື ສັນຍາລັກອື່ນໆ;
8. ອຸປະຖຳ ເພື່ອເປັນຜົນປະໂຫຍດໃຫ້ແກ່ທຸລະກິດຢາສູບ;
9. ໃຫ້ສິນບົນແກ່ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
10. ນາບຂູ່, ຂັດຂວາງ ການປະຕິບັດວຽກງານຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
11. ມີການກະທຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 49. ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່**

ຫ້າມພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີການກະທຳ ດັ່ງນີ້:

1. ສວຍໃຊ້ ຕຳແໜ່ງ, ໜ້າທີ່, ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່, ໃຫ້ ຫລື ຮັບສິນບົນ ຊຶ່ງກໍ່ຄວາມເສັຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ບຸກຄົນ ເນື່ອງມາຈາກວຽກງານ ຄວບຄຸມຢາສູບ;
2. ເປີດເຜີຍຄວາມລັບຂອງລັດ ຫລື ທາງລັດຖະການ, ກິດໜ່ວງ, ຖ່ວງດຶງ, ປອມແປງເອກະສານ, ຂາດຄວາມຮັບຜິດຊອບຕໍ່ວຽກງານຄວບຄຸມຢາສູບ ທີ່ໄດ້ຮັບມອບໝາຍ;
3. ປົກປ້ອງ, ສົມຮູ້ຮ່ວມຄິດ ກັບຜູ້ດຳເນີນທຸລະກິດຜະລິດຕະພັນຢາສູບ ທີ່ບໍ່ຖືກລະບຽບກົດໝາຍ;
4. ມີການກະທຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 50. ຂໍ້ຫ້າມສຳລັບບຸກຄົນ ແລະ ການຈັດຕັ້ງອື່ນ**

ຫ້າມບຸກຄົນ ແລະ ການຈັດຕັ້ງອື່ນ ມີການກະທຳ ດັ່ງນີ້:

1. ສະໜັບສະໜູນ ການໂຄສະນາ ສົ່ງເສີມ ຜະລິດຕະພັນຢາສູບ;
2. ສູບຢາໃນສະຖານທີ່ເກືອດຫ້າມ;
3. ຊັກຊວນ, ນຳໃຊ້ ຜູ້ອື່ນ ເປັນຕົ້ນ ເດັກຕ່ຳກວ່າ ສິບແປດປີ ສູບຢາ, ຊື້-ຂາຍ ຜະລິດຕະພັນຢາສູບ;
4. ເຂົ້າຮ່ວມການຜະລິດ, ນຳເຂົ້າ ຫລື ຈຳໜ່າຍ ຜະລິດຕະພັນຢາສູບທີ່ບໍ່ຖືກຕ້ອງ ຕາມລະບຽບກົດໝາຍ;
5. ມີການກະທຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

# ພາກທີ VII

# ການຄຸ້ມຄອງ ແລະ ການກວດກາ ວຽກງານຄວບຄຸມຢາສູບ

## ໝວດທີ 1

## ການຄຸ້ມຄອງວຽກງານຄວບຄຸມຢາສູບ

### ມາດຕາ 51. ອົງການຄຸ້ມຄອງວຽກງານຄວບຄຸມຢາສູບ

ລັດຖະບານ ຄຸ້ມຄອງວຽກງານຄວບຄຸມຢາສູບ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ ກະຊວງສາທາລະນະສຸກ ເປັນໃຈກາງປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ເປັນຕົ້ນ: ຂະແໜງການ ອຸດສາຫະກຳ ແລະ ການຄ້າ, ການເງິນ, ຖະແຫລງຂ່າວ ແລະ ວັດທະນະທຳ, ສຶກສາ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

**ອົງການຄຸ້ມຄອງວຽກງານຄວບຄຸມຢາສູບ ປະກອບດ້ວຍ:**

1. ກະຊວງສາທາລະນະສຸກ;
2. ພະແນກສາທາລະນະສຸກແຂວງ, ນະຄອນ;
3. ຫ້ອງການສາທາລະນະສຸກເມືອງ, ເທດສະບານ.

ເພື່ອໃຫ້ວຽກງານຄວບຄຸມຢາສູບ ດຳເນີນໄປຢ່າງມີປະສິດທິພາບນັ້ນ ໄດ້ສ້າງຕັ້ງ ຄະນະກຳມະການແຫ່ງຊາດ ເພື່ອການຄວບຄຸມຢາສູບຂຶ້ນ.

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການແຫ່ງຊາດ ເພື່ອການຄວບຄຸມຢາສູບ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

### ມາດຕາ 52. ສິດ ແລະ ໜ້າທີ່ ຂອງກະຊວງສາທາລະນະສຸກ

**ໃນການຄຸ້ມຄອງວຽກງານຄວບຄຸມຢາສູບ ກະຊວງສາທາລະນະສຸກ ມີສິດ ແລະ ໜ້າທີ່ ດັ່ງນີ້:**

1. ເປັນເສນາທິການໃນການຄົ້ນຄວ້າ ສ້າງແຜນຍຸດທະສາດ, ນະໂຍບາຍ, ລະບຽບກົດໝາຍ, ແຜນການ, ແຜນງານ ແລະ ໂຄງການກ່ຽວກັບວຽກງານຄວບຄຸມຢາສູບ ເພື່ອນຳສະເໜີ ລັດຖະບານພິຈາລະນາ;
2. ໂຄສະນາ ເຜີຍແຜ່ ແຜນຍຸດທະສາດ, ນະໂຍບາຍ, ລະບຽບກົດໝາຍ, ແຜນການ, ແຜນງານ ແລະ ໂຄງການກ່ຽວກັບວຽກງານຄວບຄຸມຢາສູບ ຢ່າງກວ້າງຂວາງ;
3. ຊີ້ນຳ, ຕິດຕາມ ການຈັດຕັ້ງປະຕິບັດ ແຜນຍຸດທະສາດ, ນະໂຍບາຍ, ລະບຽບກົດໝາຍ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຄວບຄຸມຢາສູບ ລວມທັງການຄົ້ນຄວ້າວິໄຈກ່ຽວກັບຢາສູບ;

4. ກໍ່ສ້າງ, ບຳລຸງ ຍົກລະດັບ, ຄຸ້ມຄອງ, ນຳໃຊ້ ພະນັກງານ, ບຸກຄະລາກອນ ກ່ຽວກັບວຽກງານຄວບຄຸມຢາສູບ ຕາມພາລະບົດບາດຂອງຕົນ;
5. ຄົ້ນຄວ້າ, ປະກອບຄຳເຫັນ ກ່ຽວກັບການຂໍອະນຸຍາດສ້າງຕັ້ງ ວິສາຫະກິດຢາສູບ ເຊັ່ນ ໂຮງງານຜະລິດຢາສູບ, ບໍລິສັດນຳເຂົ້າ, ຈຳໜ່າຍ ຜະລິດຕະພັນຢາສູບ;
6. ໂຈະ ຫລື ຍົກເລີກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການຂອງຂັ້ນລຸ່ມຂອງຕົນ ທີ່ຂັດກັບ ລະບຽບກົດໝາຍກ່ຽວກັບການຄວບຄຸມຢາສູບ;
7. ແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ, ອອກຄຳສັ່ງໃຫ້ໜ່ວຍງານທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດມາດຕະການ ທີ່ໄດ້ກຳນົດໄວ້ ພ້ອມທັງເປັນເຈົ້າການໃນການຕິດຕາມ ຢ່າງເຂັ້ມງວດ;
8. ຊີ້ນຳການບຳບັດ, ປິ່ນປົວ ຜູ້ອອກຢາສູບ ແລະ ຜູ້ໄດ້ຮັບຜົນຮ້າຍ, ເຈັບເປັນ ຈາກຢາສູບ;
9. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນວຽກງານຄວບຄຸມຢາສູບ ແລະ ຄຸ້ມຄອງ, ນຳໃຊ້ກອງທຶນຄວບຄຸມຢາສູບ ໃຫ້ມີປະສິດທິຜົນ;
10. ພົວພັນຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານຄວບຄຸມຢາສູບ;
11. ປະເມີນຜົນ, ສະຫລຸບ ແລະ ລາຍງານ ວຽກງານຄວບຄຸມຢາສູບໃຫ້ລັດຖະບານ ຢ່າງເປັນປົກກະຕິ;
12. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 53. ສິດ ແລະ ໜ້າທີ່ ຂອງພະແນກສາທາລະນະສຸກແຂວງ, ນະຄອນ**

**ໃນການຄຸ້ມຄອງວຽກງານຄວບຄຸມຢາສູບ ພະແນກສາທາລະນະສຸກແຂວງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:**

1. ຜັນຂະຫຍາຍ ແຜນຍຸດທະສາດ, ນະໂຍບາຍ, ລະບຽບກົດໝາຍ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຄວບຄຸມຢາສູບ ມາເປັນວຽກງານລະອຽດຂອງຕົນ ເພື່ອຈັດຕັ້ງປະຕິບັດ;
2. ໂຄສະນາ, ເຜີຍແຜ່ ລະບຽບກົດຫມາຍ, ຂໍ້ມູນຂ່າວສານກ່ຽວກັບວຽກງານຄວບຄຸມຢາສູບ ຕາມຄວາມຮັບຜິດຊອບຂອງຕົນ;
3. ຊີ້ນຳ, ຕິດຕາມ ການຈັດຕັ້ງປະຕິບັດວຽກງານຄວບຄຸມຢາສູບ ຂອງຫ້ອງການສາທາລະນະສຸກເມືອງ, ເທດສະບານ;
4. ຊີ້ນຳ ໜ່ວຍງານໃຫ້ຄຳປຶກສາ ແລະ ຊ່ວຍເຫລືອ ຜູ້ອອກຢາສູບໃນການປະຕິບັດໜ້າທີ່ວຽກງານ;
5. ພິຈາລະນາແກ້ໄຂຄຳສະເໜີກ່ຽວກັບບັນຫາທີ່ກ່ຽວຂ້ອງກັບຢາສູບ ແລະ ຜະລິດຕະພັນຢາສູບ ໃນຄວາມຮັບຜິດຊອບຂອງຕົນ ຫລື ສະເໜີໃຫ້ອົງການຂັ້ນເທິງທີ່ກ່ຽວຂ້ອງແກ້ໄຂ;

6. ຄົ້ນຄວ້າ, ປະກອບຄຳເຫັນ ກ່ຽວກັບການຂໍອະນຸຍາດສ້າງຕັ້ງ ວິສາຫະກິດຢາສູບ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເຊັ່ນ ໂຮງງານຜະລິດຢາສູບ, ບໍລິສັດນຳເຂົ້າ, ຈຳໜ່າຍຜະລິດຕະພັນຢາສູບ;
7. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງໃນວຽກງານຄວບຄຸມຢາສູບ ແລະ ສະເໜີນຳໃຊ້ກອງທຶນຄວບຄຸມຢາສູບ ຕາມລະບຽບການ;
8. ພົວພັນຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານຄວບຄຸມຢາສູບ ຕາມການມອບໝາຍ;
9. ປະເມີນຜົນ, ສະຫລຸບ ແລະ ລາຍງານ ວຽກງານຄວບຄຸມຢາສູບ ໃຫ້ກະຊວງສາທາລະນະສຸກ ແລະ ອົງການປົກຄອງແຂວງ, ນະຄອນ ຢ່າງເປັນປົກກະຕິ;
10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 54. ສິດ ແລະ ໜ້າທີ່ ຂອງຫ້ອງການສາທາລະນະສຸກເມືອງ, ເທດສະບານ**

**ໃນການຄຸ້ມຄອງວຽກງານຄວບຄຸມຢາສູບ ຫ້ອງການສາທາລະນະສຸກເມືອງ, ເທດສະບານ ມີສິດ ແລະ ໜ້າທີ່ ດັ່ງນີ້:**

1. ຈັດຕັ້ງປະຕິບັດນະໂຍບາຍ, ແຜນງານ, ໂຄງການ, ລະບຽບກົດໝາຍ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ຂອງກະຊວງສາທາລະນະສຸກ ແລະ ພະແນກສາທາລະນະສຸກແຂວງ, ນະຄອນ;
2. ເຜີຍແຜ່ລະບຽບກົດໝາຍ, ຂໍ້ມູນຂ່າວສານ ກ່ຽວກັບວຽກງານຄວບຄຸມຢາສູບ, ຜົນຮ້າຍຂອງຢາສູບ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ຊີ້ນຳ ໜ່ວຍງານບຳບັດ ຜູ້ອອກຢາສູບ ແລະ ປິ່ນປົວ ຜູ້ໄດ້ຮັບຜົນຮ້າຍ, ເຈັບເປັນ ຈາກຢາສູບ;
4. ພິຈາລະນາແກ້ໄຂຄຳສະເໜີກ່ຽວກັບບັນຫາຢາສູບ ຕາມຄວາມຮັບຜິດຊອບຂອງຕົນ ຫລື ສະເໜີໃຫ້ອົງການຂັ້ນເທິງແກ້ໄຂ;
5. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນວຽກງານຄວບຄຸມຢາສູບ ແລະ ສະເໜີນຳໃຊ້ກອງທຶນຄວບຄຸມຢາສູບ ລວມທັງການກຳນົດສະຖານທີ່ຂາຍຢາສູບ ຕາມລະບຽບການ;
6. ປະເມີນຜົນ, ສະຫລຸບ ແລະ ລາຍງານ ວຽກງານຄວບຄຸມຢາສູບໃຫ້ພະແນກສາທາລະນະສຸກແຂວງ, ນະຄອນ ແລະ ອົງການປົກຄອງເມືອງ, ເທດສະບານ ຢ່າງເປັນປົກກະຕິ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 55. ສິດ ແລະ ໜ້າທີ່ ຂອງຂະແໜງການອື່ນ**

ໃນການຄຸ້ມຄອງວຽກງານຄວບຄຸມຢາສູບ ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ ປະສານສົມທົບກັບຂະແໜງການສາທາລະນະສຸກ ໃນວຽກງານຄວບຄຸມຢາສູບ ຕາມພາລະບົດບາດຂອງຕົນເພື່ອເຮັດໃຫ້ວຽກງານດັ່ງກ່າວ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ລວມທັງສ້າງຂະບວນການຄວບຄຸມຢາສູບ, ປຸກລະດົມ ແລະ ປະກອບສ່ວນ ທຶນຮອນໃຫ້ແກ່ກອງທຶນຄວບຄຸມຢາສູບ.

## ໝວດທີ 2

## ການກວດກາວຽກງານຄວບຄຸມຢາສູບ

**ມາດຕາ 56. ອົງການກວດກາວຽກງານຄວບຄຸມຢາສູບ**

**ອົງການກວດກາວຽກງານຄວບຄຸມຢາສູບ ມີ:**

1. ອົງການກວດກາພາຍໃນ ຊຶ່ງແມ່ນ ພາກສ່ວນໜຶ່ງຂອງອົງການຄຸ້ມຄອງວຽກງານຄວບຄຸມຢາສູບຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 51 ຂອງກົດໝາຍສະບັບນີ້;
2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ອົງການກວດກາລັດ, ອົງການກວດສອບແຫ່ງລັດ ແລະ ການຕິດຕາມກວດກາຂອງປະຊາຊົນ.

**ມາດຕາ 57. ເນື້ອໃນການກວດກາວຽກງານຄວບຄຸມຢາສູບ**

**ການກວດກາວຽກງານຄວບຄຸມຢາສູບ ມີເນື້ອໃນຕົ້ນຕໍ ດັ່ງນີ້:**

1. ກວດກາການຈັດຕັ້ງປະຕິບັດ ແຜນການ, ໂຄງການ, ລະບຽບກົດໝາຍກ່ຽວກັບການຄວບຄຸມຢາສູບ ລວມທັງການປະຕິບັດສັນຍາທຸລະກິດຢາສູບ;
2. ກວດກາການດຳເນີນທຸລະກິດກ່ຽວກັບຜະລິດຕະພັນຢາສູບ ເປັນຕົ້ນ ການບັນຈຸ, ການຫຸ້ມຫໍ່, ການຕິດສະຫລາກ, ຄຳເຕືອນ, ການນຳເຂົ້າ, ການຈຳໜ່າຍ; ກວດກາ ການສູບຢາຢູ່ສະຖານເກືອດຫ້າມ;
3. ກວດກາການເຄື່ອນໄຫວຂອງການຈັດຕັ້ງ, ພະນັກງານ, ເຈົ້າໜ້າທີ່ ແລະ ປະຊາຊົນ ກ່ຽວກັບວຽກງານຄວບຄຸມຢາສູບ.

**ມາດຕາ 58. ສິດ ແລະ ໜ້າທີ່ຂອງອົງການກວດກາວຽກງານຄວບຄຸມຢາສູບ**

**ອົງການກວດກາວຽກງານຄວບຄຸມຢາສູບ ມີສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:**

1. ຕິດຕາມ, ກວດກາຫົວໜ່ວຍທຸລະກິດຢາສູບ ໃນການປະຕິບັດ ລະບຽບກົດໝາຍ ກ່ຽວກັບການຄວບຄຸມຢາສູບ;
2. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ໃນການກວດກາວຽກງານຄວບຄຸມຢາສູບ;
3. ຕົກລົງ ວິທີການ, ມາດຕະການແກ້ໄຂ ຜົນຂອງການກວດກາ ຫລື ສະເໜີໃຫ້ຂັ້ນເທິງແກ້ໄຂ;
4. ປະເມີນຜົນ, ສະຫລຸບ, ຖອດຖອນບົດຮຽນ ແລະ ລາຍງານຂັ້ນເທິງ ກ່ຽວກັບວຽກງານກວດກາ ການຄວບຄຸມຢາສູບ.

**ມາດຕາ 59. ຮູບການ ການກວດກາ**

ການກວດກາ ສາມາດດຳເນີນຕາມແຜນການປົກກະຕິ, ນອກແຜນການໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຫລື ແບບກະທັນຫັນ.

# ພາກທີ VIII
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 60. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ຫລື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການເປັນແບບຢ່າງ, ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຈັດຕັ້ງປະຕິບັດວຽກງານຄວບຄຸມຢາສູບ ຈະໄດ້ຮັບການຍ້ອງຍໍ ຫລື ນະໂຍບາຍອື່ນ ຕາມຄວາມເໝາະສົມ ແລ້ວແຕ່ລະກໍລະນີ.

**ມາດຕາ 61. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫລື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ລະບຽບການກ່ຽວກັບການຜະລິດ, ການນຳເຂົ້າ, ການຈຳໜ່າຍ, ຊື້-ຂາຍ, ສະຖານທີ່ຫ້າມສູບຢາ, ລະເມີດຂໍ້ຫ້າມອື່ນໆ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ປະຕິບັດວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫລື ລົງໂທດທາງອາຍາ ແລ້ວແຕ່ກໍລະນີເບົາ ຫລື ໜັກ.

**ມາດຕາ 62. ມາດຕະການສຶກສາອົບຮົມ**

ບຸກຄົນ ຫລື ການຈັດຕັ້ງ ທີ່ໄດ້ລະເມີດລະບຽບກົດໝາຍ ກ່ຽວກັບການຄວບຄຸມຢາສູບ ທີ່ມີລັກສະນະເບົາ ເປັນຕົ້ນ ການຂາຍຢາສູບໃຫ້ເດັກທີ່ມີອາຍຸຕໍ່າກວ່າ ສິບແປດ ປີ, ຂາຍຢາຢູ່ບ່ອນທີ່ບໍ່ໄດ້ຮັບອະນຸຍາດ, ສູບຢາໃນສະຖານທີ່ເກືອດຫ້າມ ເປັນຄັ້ງທໍາອິດ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ.

**ມາດຕາ 63. ມາດຕະການທາງວິໄນ**

**ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງທີ່ໄດ້ລະເມີດລະບຽບກົດໝາຍ ກ່ຽວກັບການຄວບຄຸມຢາສູບ ຈະຖືກປະຕິບັດວິໄນ ໃນກໍລະນີດັ່ງນີ້:**

1. ກົດໜ່ວງ, ຖ່ວງດຶງ ເອກະສານກ່ຽວກັບຢາສູບ ທີ່ບໍ່ສ້າງຄວາມເສຍຫາຍຢ່າງຫລວງຫລາຍ;
2. ຂາດຄວາມຮັບຜິດຊອບ ຕໍ່ວຽກງານຄວບຄຸມຢາສູບ ທີ່ຕົນໄດ້ຮັບມອບຫມາຍ ຊຶ່ງໄດ້ສ້າງຄວາມເສຍຫາຍເລັກໜ້ອຍ ແລະ ບໍ່ເປັນການກະທໍາຜິດທາງອາຍາ;
3. ມີການລະເມີດຂໍ້ຫ້າມອື່ນ ທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍເລັກໜ້ອຍ ແລະ ບໍ່ມີອົງປະກອບຂອງການກະທໍາຜິດທາງອາຍາ.

ການປະຕິບັດວິໄນ ຕໍ່ພະນັກງານ ແລະ ເຈົ້າໜ້າທີ່ດັ່ງກ່າວ ໄດ້ກໍານົດໄວ້ໃນລະບຽບການສະເພາະ.

**ມາດຕາ 64. ມາດຕະການປັບໃໝ**

ບຸກຄົນ ຫລື ການຈັດຕັ້ງ ທີ່ໄດ້ລະເມີດລະບຽບກົດໝາຍ ກ່ຽວກັບການຄວບຄຸມຢາສູບ ເປັນຕົ້ນ ການຜະລິດ, ການນໍາເຂົ້າ, ການຈໍາໜ່າຍ ແລະ ຊື້-ຂາຍ ຜະລິດຕະພັນຢາສູບທີ່ບໍ່ມີສະຫລາກ, ຄໍາເຕືອນໃສ່ວັດຖຸຫຸ້ມຫໍ່, ຂາຍຢາສູບໃນສະຖານທີ່ເກືອດຫ້າມ, ຂາຍຢາສູບໃຫ້ເດັກ ທີ່ມີອາຍຸຕໍ່າກວ່າ ສິບແປດ ປີ ທີ່ໄດ້ກ່າວເຕືອນມາແລ້ວ, ຂາຍຢາຊອງທີ່ບັນຈຸຕໍ່າກວ່າ ຊາວ ກອກ ກໍຈະຖືກປັບໃໝ.

ອັດຕາການປັບໃໝ ໄດ້ກໍານົດໄວ້ໃນລະບຽບການສະເພາະ.

**ມາດຕາ 65. ມາດຕະການທາງແພ່ງ**

ບຸກຄົນ ຫລື ການຈັດຕັ້ງ ທີ່ໄດ້ລະເມີດລະບຽບກົດໝາຍ ກ່ຽວກັບການຄວບຄຸມຢາສູບ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜູ້ອື່ນ ຈະຖືກໃຊ້ແທນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 66. ມາດຕະການທາງອາຍາ**

ບຸກຄົນ ທີ່ໄດ້ລະເມີດລະບຽບກົດໝາຍ ກ່ຽວກັບການຄວບຄຸມຢາສູບ ເປັນຕົ້ນ ການລະເມີດຂໍ້ຫ້າມ ຊຶ່ງເປັນການກະທໍາຜິດທາງອາຍາ ຈະຖືກລົງໂທດຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍອາຍາ.

# ພາກທີ IX

# ບົດບັນຍັດສຸດທ້າຍ

**ມາດຕາ 67. ວັນງົດສູບຢາແຫ່ງຊາດ**

ສປປ ລາວ ຖືເອົາວັນທີ 31 ພຶດສະພາ ຂອງທຸກປີ ເປັນວັນງົດສູບຢາແຫ່ງຊາດ ດ້ວຍການສ້າງຂະບວນການ, ກິດຈະກຳຕ່າງໆ ກ່ຽວກັບການຄວບຄຸມຢາສູບ ແລະ ການສົ່ງເສີມສຸຂະພາບ.

**ມາດຕາ 68. ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 69. ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫລັງ ຫົກສິບວັນ ນັບແຕ່ວັນ ປະທານປະເທດແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

**ທອງສິງ ທຳມະວົງ**